ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ
ສຳນັກງານ ຄຄຊ

ເລກທີ 60 /ສຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 29 DEC 2021

## <u>ແຈ້ງການ</u>

**ເຖິງ:** ທ່ານ ຜູ້ອຳນວຍການ ບໍລິສັດ ລາວເຈີ່ງຊິນ ປະເມີນມູນຄ່າຊັບສິນ ຈຳກັດ ທີ່ນັບຖື,
**ເລື່ອງ:** ຖອນໃບຮັບຮອງບໍລິສັດ ແລະ ຜູ້ປະເມີນມູນຄ່າຊັບສິນ.

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ເລກທີ 79/ສພຊ ລົງວັນທີ 3 ທັນວາ 2019;
- ອີງຕາມລະບຽບວ່າດ້ວຍການຮັບຮອງບໍລິສັດປະເມີນມູນຄ່າຊັບສິນ ເລກທີ 003/ຄຄຊ ລົງວັນທີ 08 ທັນວາ 2015;
- ອີງຕາມໜັງສືສະເໜີຂອງບໍລິສັດ ລາວເຈີ່ງຊິນ ປະເມີນມູນຄ່າຊັບສິນ ຈຳກັດ ເລກທີ 002/2021 ລົງວັນທີ 29 ພະຈິກ 2021.

ສຳນັກງານ ຄຄຊ ຂໍຖືເປັນກຽດແຈ້ງມາຍັງທ່ານ ກ່ຽວກັບ ການສະເໜີຂໍຢຸດໂຈະຊົ່ວຄາວກ່ຽວກັບການເຄື່ອນໄຫວຂອງບໍລິສັດ ລາວເຈີ່ງຊິນ ປະເມີນມູນຄ່າຊັບສິນ ຈຳກັດ ໃນວຽກງານຫຼັກຊັບ ອີງຕາມໜັງສືສະເໜີ ເລກທີ 002/2021 ລົງວັນທີ 29 ພະຈິກ 2021 ໂດຍອີງຕາມກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ເລກທີ 79/ສພຊ ລົງວັນທີ 3 ທັນວາ 2019 ແລະ ລະບຽບວ່າດ້ວຍການຮັບຮອງບໍລິສັດປະເມີນມູນຄ່າຊັບສິນ ເລກທີ 003/ຄຄຊ ລົງວັນທີ 08 ທັນວາ 2015 ເຫັນວ່າ ການສະເໜີດັ່ງກ່າວ ຕົກກໍລະນີ ການຖອນໃບຮັບຮອງຕາມການຮ້ອງຂໍ ແລະ ດ້ວຍຄວາມສະໝັກໃຈຂອງບໍລິສັດລາວເຈີ່ງຊິນ ປະເມີນມູນຄ່າຊັບສິນ ຈຳກັດ ແລະ ພ້ອມດຽວກັນນັ້ນ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ກະຊວງອຸດສາຫະກຳ ແລະ ການຄ້າ ກໍ່ໄດ້ມີການແຈ້ງໂຈະການເຄື່ອນໄຫວຂອງບໍລິສັດ ລາວເຈີ່ງຊິນ ປະເມີນມູນຄ່າຊັບສິນ ຈຳກັດ. ສະນັ້ນ, ສຳນັກງານ ຄຄຊ ຈຶ່ງຂໍຖອນໃບຮັບຮອງ ບໍລິສັດ ລາວເຈີ່ງຊິນ ປະເມີນມູນຄ່າຊັບສິນ ຈຳກັດ ແລະ ຜູ້ປະເມີນມູນຄ່າຊັບສິນຂອງບໍລິສັດ ລາວເຈີ່ງຊິນ ປະເມີນມູນຄ່າຊັບສິນ ຈຳກັດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ໃນອານາຄົດ ຖ້າບໍລິສັດ ລາວເຈີ່ງຊິນ ປະເມີນມູນຄ່າຊັບສິນ ຈຳກັດ ຕ້ອງການສະເໜີຂໍການຮັບຮອງມາເຄື່ອນໄຫວໃນວຽກງານຫຼັກຊັບຄືນໃໝ່ ສຳນັກງານ ຄຄຊ ກໍ່ຍິນດີຄົ້ນຄວ້າພິຈາລະນາຕາມລະບຽບການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ກະລຸນານຳສົ່ງໃບຮັບຮອງບໍລິສັດ ແລະ ຜູ້ປະເມີນມູນຄ່າຊັບສິນໃຫ້ສຳນັກງານ ຄຄຊ ພາຍໃນ 3 ວັນລັດຖະການນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຊັນແທນຫົວໜ້າສຳນັກງານ ຄຄຊ**
**ຮອງຫົວໜ້າສຳນັກງານ ຄຄຊ**

ສຸວອນສະຫວາດ ທິລະກຸນ

Scanned with CamScanner